ໃນວັນທີ 30 ກັນຍາ ທີ່ຜ່ານມາ ໄດ້ມີກອງປະຊຸມຂອງຄະນະອະນຸກຳມະການຂະແໜງສາທາລະນະສຸກ ເພື່ອທົບທວນຮ່າງແຜນພັດທະນາສາທາລະນະສຸກ ຄັ້ງທີ X (2026-2030) ແລະ ທົບທວນຜົນງານຈາກການຈັດຕັ້ງປະຕິບັດແຜນພັດທະນາຄັ້ງທີ IX (2021-2025).

ກອງປະຊຸມ ແມ່ນເປັນປະທານໂດຍລັດຖະມົນຕີກະຊວງສາທາລະນະສຸກ ແລະ ເປັນປະທານຮ່ວມໂດຍ ຮອງຜູ້ຕາງໜ້າອົງການອະນາໄມໂລກ ແລະ ເອກອັກຄະລັດຖະທູດຍີ່ປຸ່ນ ປະຈຳ ສປປ ລາວ. ກອງປະຊຸມ ແມ່ນເຂົ້າຮ່ວມໂດຍຕາງໜ້າຈາກບັນດາຄູ່ຮ່ວມພັດທະນາຫຼາຍພາກສ່ວນ ເຊິ່ງເປັນເວທີ ໃນການປຶກສາຫາລືວຽກງານທີ່ເປັນບູລິມະສິດໃນຂະແໜງສາທາລະນະສຸກ ແລະ ປະສານສົບທົບການຊ່ວຍເຫຼືອໃນການເລັ່ງໃສ່ວຽກງານການປົກຄຸມສຸຂະພາບທົ່ວປວງຊົນ ແລະ ເພື່ອໃຫ້ບັນລຸບັນດາເປົ້າໝາຍການພັດທະນາແບບຍືນຍົງ ໂດຍສະເພາະໃນຂົງເຂດສາທາລະນະສຸກ ໃນ ສປປ ລາວ.

ສປປ ລາວ ໄດ້ມີຜົນງານດ້ານສາທາລະນະສຸກຢ່າງໂດດເດັ່ນໃນຊຸມປີທີ່ຜ່ານມາ, ໂດຍສະເພາະແມ່ນການຍົກສູງວຽກງານສຸຂະພາບແມ່ ແລະ ເດັກ ແລະ ພະຍາດຕິດຕໍ່ ເຊັ່ນ ອັດຕາການເສຍຊີວິດຂອງແມ່ໄດ້ຫຼຸດລົງເຖິງ 81.6% ຕໍ່ການເກີດມີຊີວິດ 100,000 ຄົນ ຈາກປີ 2000 ຫາປີ 2023, ໃນຂະນະທີ່ກໍລະນີພະຍາດໄຂ້ມາລາເຣຍໄດ້ຫຼຸດລົງ 85% ແຕ່ປີ 2022 ເຊິ່ງພາຍໃນປີ 2024 ໄດ້ຫຼຸດລົງເຫຼືອໜ້ອຍກວ່າ 350 ກໍລະນີ.

ທ່ານ ດຣ ຄຣິສໂຕເຟີ ຟິສແພທຣິກ, ຮອງຜູ້ຕາງໜ້າອົງການອະນາໄມໂລກ ປະຈຳ ສປປ ລາວ ໄດ້ກ່າວວ່າ: "ການສ້າງແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ X ມີຄວາມສຳຄັນສຳລັບ ສປປ ລາວ. ຜ່ານມາ ໄດ້ມີການປ່ຽນແປງ, ປັບປຸງ , ເອົາຊະນະອຸປະສັກ ແລະ ບັນລຸຄວາມຄືບໜ້າໃນວຽກງານສາທາລະນະສຸກຢ່າງຫຼວງຫຼາຍ ເຊິ່ງສະແດງໃຫ້ເຫັນວ່າ ທຸກຄວາມສຳເລັດມີຄວາມເປັນໄປໄດ້. ແຕ່ໃນຂະນະດຽວກັນ, ພວກເຮົາກໍຍັງຕ້ອງໄດ້ສືບຕໍ່ໃນການແກ້ໄຂບັນຫາທີ່ຍັງຄົງຄ້າງໃຫ້ປະກົດຜົນເປັນຈິງ.”

“ເນື່ອງຈາກ ສປປ ລາວ ປະເຊີນກັບບັນຫາການຫຼຸດລົງຂອງການຊ່ວຍເຫຼືອຈາກສາກົນ, ພວກເຮົາຕ້ອງສຸມໃສ່ການນຳໃຊ້ຊັບພະຍາກອນທີ່ມີຢູ່ໃຫ້ມີປະສິດທິພາບສູງສຸດ ໂດຍສະເພາະເພີ່ມທະວີການເພີ່ມງົບປະມານໃຫ້ແກ່ວຽກງານດ້ານສາທາລະນະສຸກ ໂດຍຜ່ານການເກັບອາກອນສຸຂະພາບ, ປຶກສາຫາລື ແລະ ຈັດບູລິມະສິດໃຫ້ຈະແຈ້ງ ພ້ອມທັງຈັດສັນການມີສ່ວນຮ່ວມຂອງພາກສ່ວນຕ່າງໆໃຫ້ຈະແຈ້ງ ໂດຍອີງໃສ່ຂໍ້ມູນຫຼັກຖານໃນການວາງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມ, ແລະ ເພີ່ມຄວາມຮັບຜິດຊອບຮ່ວມກັນ ໃນການແກ້ໄຂບັນດາສິ່ງທ້າທາຍຕ່າງໆ ໃນຂະແໜງສາທາລະນະສຸກ; ເພີ່ມທະວີຄວາມຄວາມເອົາໃຈໃສ່ກ່ຽວກັບໄພຂົ່ມຂູ່ດ້ານສຸຂະພາບ, ໃນການຮັບມື ແລະ ແກ້ໄຂບັນຫາພະຍາດບໍ່ຕິດຕໍ່ ແລະ ການປ່ຽນແປງດິນຟ້າອາກາດ; ແລະ ບູລິມະສິດປະຊາຊົນຜູ້ທຸກຍາກ ແລະ ດ້ອຍໂອກາດ. ຂົງເຂດເຫຼົ່ານີ້ ແມ່ນມີຄວາມສຳຄັນຢ່າງຍິ່ງໃນການສ້າງລະບົບສາທາລະນະສຸກແບບຍືນຍົງທີ່ສາມາດບັນລຸການປົກຄຸມສຸຂະພາບທົ່ວປວງຊົນ ແລະ ບໍ່ປະຜູ້ໃດໄວ້ຂ້າງຫຼັງ.”